ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

<u>ສຳນັກງານນາຍົກລັດຖະມົນຕີ</u>

ເລກທີ: 321.../ນຍ.

ນະຄອນຫລວງວຽງຈັນ, ວັນທີ: 06.09.2007.

# ດຳລັດ

## ວ່າດ້ວຍ ການກຳນົດເຂດປ່າຜະລິດແຫ່ງຊາດ ຈຳນວນ 29 ເຂດ ໃນ 8 ແຂວງ

---

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສ ປ ປ ລາວ ສະບັບ ເລກທີ 02/03/ສພຊ, ລົງວັນທີ 06/05/ 2003.
- ອີງຕາມ ກົດໝາຍປ່າໄມ້ ສະບັບ ເລກທີ 13/ສພຊ, ລົງວັນທີ 09 ພະຈິກ 2005.
- ອີງຕາມ ເອກະສານສະເໜີ ຂອງທ່ານລັດຖະມົນຕີ ກະຊວງ ກະສິກຳ ແລະ ປ່າໄມ້ ສະບັບເລກທີ 0130/ກປ.07 ລົງວັນທີ 15/06/2007.

## ນາຍົກລັດຖະມົນຕີ ອອກດຳລັດ:

ມາດຕາ 1: ຮັບຮອງເອົາເຂດປ່າຜະລິດຈຳນວນ 29 ເຂດໃນ 8 ແຂວງ ຄື: ແຂວງ ອຸດົມໄຊ, ບໍ່ແກ້ວ, ຊຽງຂວາງ, ຫົວພັນ, ໄຊຍະບູລີ, ວຽງຈັນ, ບໍລິຄຳໄຊ ແລະ ອັດຕະປື ກຳນົດເປັນເຂດປ່າຜະລິດ ແຫ່ງຊາດ ລະອຽດມີດັ່ງນີ້:

| ລ/ດ | ຊື່ປ່າຜະລິດ | ເນື້ອທີ່ (ຮຕ) | ທີ່ຕັ້ງ (ແຂວງ) | ຂອບເຂດທີ່ຕັ້ງ | |
|---|---|---|---|---|---|
| | | | | ເສັ້ນແວງ | ເສັ້ນຂະໜານ |
| 01. | ນ້ຳພາກ | 52.118 | ອຸດົມໄຊ | 101°47'30" - 102°05'20" | 20°48'05" - 21°07'30" |
| 02. | ນ້ຳງາ | 98.786 | ອຸດົມໄຊ | 101°46'00" - 102°10'15" | 20°08'45" - 20°36'45" |
| 03. | ສາຍຂອງ | 69.791 | ອຸດົມໄຊ | 101°12'50" - 101°46'45" | 19°49'05" - 20°01'20" |
| 04. | ສາມເມືອງ | 78.699 | ບໍ່ແກ້ວ | 100°12'10" - 100°44'20" | 20°25'05" - 20°46'40" |
| 05. | ພູວຽງໄຊ | 44.894 | ບໍ່ແກ້ວ | 100°48'35" - 101°15'10" | 19°59'30" - 20°13'50" |
| 06. | ນ້ຳຈຶງ-ນ້ຳງຽບ | 122.259 | ຊຽງຂວາງ | 103°19'20" - 103°54'50" | 18°51'40" - 19°18'20" |
| 07. | ລ້ອງຕານ - ລ້ອງຄາວ | 97.816 | ຊຽງຂວາງ | 102°57'00" - 103°35'00" | 19°41'30" - 19°54'45" |

| | | | | | |
|---|---|---|---|---|---|
| 08. | ນ້ຳໄມ້ | 90.534 | ຊຽງຂວາງ | 103°50'38" - 104°14'20" | 18°48'10" - 19°32'00" |
| 09. | ຍອດເຍື້ອງ-ຜາແດງ | 68.133 | ຫົວພັນ | 104°07'40" - 104°34'40" | 19°19'50" - 19°51'30" |
| 10. | ຫ້ວຍຄໍ້ | 31.476 | ຫົວພັນ | 103°21'00" - 103°37'20" | 19°59'00" - 20°10'40" |
| 11. | ພູລີວ | 71.823 | ຫົວພັນ | 103°44'10" - 104°12'10" | 20°03'40" - 20°21'55" |
| 12. | ພູຜາດຳ | 95.224 | ໄຊຍະບູລີ | 101°27'00" - 101°48'00" | 18°26'00" - 19°11'00" |
| 13. | ພູຜາແດງ | 16.393 | ໄຊຍະບູລີ | 101°02'00" - 101°11'00" | 17°34'00" - 17°45'00" |
| 14. | ຫ້ວຍຍາງ | 36.717 | ໄຊຍະບູລີ | 101°28'00" - 101°41'00" | 19°35'00" - 19°51'00" |
| 15. | ຜານາງນອນ | 48.174 | ໄຊຍະບູລີ | 100°40'00" - 101°01'00" | 19°40'00" - 19°53'00" |
| 16. | ຜານາງງອຍ | 29.144 | ໄຊຍະບູລີ | 100°27'00" - 100°43'00" | 19°35'00" - 19°48'00" |
| 17. | ແກ້ງໃຈກ - ນ້ຳງື່ມ | 114.943 | ໄຊຍະບູລີ | 101°17'00" - 101°40'00" | 18°35'00" - 19°37'00" |
| 18. | ພູເຍີຍ | 100.228 | ວຽງຈັນ | 101°42'00" - 102°02'00" | 18°07'00" - 18°54'00" |
| 19. | ຫ້ວຍຊຽດ | 36.479 | ວຽງຈັນ | 101°46'00" - 102°04'00" | 15°52'00" - 19°10'00" |
| 20. | ໜອງເປັດ - ນາແຊງ | 68.725 | ວຽງຈັນ | 102°04'00" - 102°23'00" | 18°48'00" - 19°07'00" |
| 21. | ພູຜາພຽງ | 36.107 | ວຽງຈັນ | 101°30'45" - 102°49'20" | 19°06'30" - 19°18'30" |
| 22. | ພູສາມຫຼຸມ | 44.780 | ວຽງຈັນ | 103°11'00" - 103°28'40" | 18°46'50" - 19°08'10" |
| 23. | ຫ້ວຍສູບ - ນ້ຳເຕັກ | 8.590 | ບໍລິຄຳໄຊ | 103°27'29" - 103°34'30" | 18°30'00" - 18°37'00" |
| 24. | ພູຕຸ້ມ | 12.179 | ບໍລິຄຳໄຊ | 103°35'30" - 103°47'00" | 18°33'00" - 18°45'00" |
| 25. | ພູປ່າຊາງ - ປຸ່ງອິກ | 47.657 | ບໍລິຄຳໄຊ | 103°28'00" - 103°49'00" | 18°37'00" - 18°55'30" |
| 26. | ຜັກເພືອກ | 112.756 | ບໍລິຄຳໄຊ | 103°46'00" - 104°07'00" | 18°19'30" - 18°51'30" |
| 27. | ນ້ຳກົງ | 88.559 | ອັດຕະປື | 106°37'00" - 107°13'00" | 14°31'00" - 14°52'00" |
| 28. | ເຊຄຳພໍ - ບ້ານແບ່ງວິໄລ | 37.862 | ອັດຕະປື | 106°10'00" - 106°23'00" | 14°41'00" - 15°00'00" |
| 29. | ຫ້ວຍວີ - ນ້ຳປາ | 75.037 | ອັດຕະປື | 106°48'00" - 107°09'00" | 14°54'00" - 15°17'00" |
| | ເນື້ອທີ່ລວມ: | 1.835.824 | | | |

ມາດຕາ 2: ມອບໃຫ້ ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການ ປະສານສົມທົບກັບອົງການປົກຄອງແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງດຳເນີນການສຳຫລວດ, ວາງແຜນຈັດສັນ ແລະ ຄຸ້ມຄອງ ແບບຍືນນານໃຫ້ໄດ້ຮັບຜົນດີ.

ມາດຕາ 3: ບັນດາກະຊວງ, ອົງການທຽບເທົ່າ, ແຂວງ, ນະຄອນຫລວງວຽງຈັນ ແລະ ພາກສ່ວນທີ່ກ່ຽວຂ້ອງ ອື່ນໆຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດດຳລັດສະບັບນີ້ໃຫ້ໄດ້ຮັບຜົນເປັນຢ່າງດີ.

ມາດຕາ 4: ດຳລັດສະບັບນີ້ມີຜົນສັກສິດ ແລະ ນຳໃຊ້ໄດ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ. ລາວ.

ບົວສອນ ບຸບຜາວັນ